**ມິຊຊາສົມໂພດພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ**

**ວັນອາທິດທີ 16 ພຶດສະພາ 2021**



**ພຣະວໍລະສານໂດຍນັກບຸນມາໂກ 16, 14-20**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວແກ່ພວກສາວົກວ່າ: “ຈົ່ງໄປທົ່ວໂລກປະກາດພຣະວໍລະສານແກ່ມວນມະນຸດ. ຜູ້ໃດເຊື່ອແລະຮັບສິນລ້າງບາບ, ຜູ້ນັ້ນຈະເອົາຕົວຣອດ; ຜູ້ໃດບໍ່ຍອມເຊື່ອຈະຖືກຕັດສິນລົງໂທດ. ຜູ້ເຊື່ອຈະທຳອັດສະຈັນນີ້ໄດ້ຄື: ຈະໄລ່ຜີປີສາດໄດ້ ດ້ວຍອາໄສນາມຂອງເຮົາ, ຈະປາກພາສາຕ່າງໆໄດ້, ຈັບງູໄດ້, ແລະຖ້າເຂົາກິນຂອງເບື່ອແນວຕາຍ, ກໍບໍ່ເປັນອັນຕະລາຍ; ເຂົາຈະປົກມືເທິງຄົນເຈັບໄຂ, ແລະຜູ້ເຈັບໄຂກໍຈະຫາຍຈາກພະຍາດ.”

ເມື່ອກ່າວດັ່ງນີ້ແລ້ວ, ພຣະເຢຊູເຈົ້າກໍສະເດັດຂຶ້ນສະຫວັນ, ປະທັບຢູ່ເບື້ອງຂວາຂອງພຣະເປັນເຈົ້າ. ສ່ວນພວກອັກຄະສາວົກກໍໄດ້ແຕກກັນໄປເທດສະໜາສັ່ງສອນທຸກແຫ່ງຫົນ, ພຣະອົງເຈົ້າໄດ້ຮ່ວມມືກັບພວກເຂົາ, ແລະໄດ້ຮັບຮອງຄຳສັ່ງສອນຂອງພວກເຂົາ ດ້ວຍບັນດານໃຫ້ເກີດມີການອັດສະຈັນຕ່າງໆໄປພ້ອມດ້ວຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົດອ່ານທັງສາມບົດໃນວັນສົມໂພດພຣະເຢຊູເຈົ້າສະເດັດຂຶ້ນສະຫວັນນີ້, ຝ່າຍໜຶ່ງກໍໃຫ້ພວກເຮົາເຫັນວ່າ ພາລະກິດແຫ່ງການກູ້ໄຖ່ຂອງພຣະເຢຊູເຈົ້າໃນແຜ່ນດິນນີ້ໄດ້ສຳເລັດລົງຢ່າງມີໝາກຜົນ. ດຽວນີ້, ພຣະອົງກັບຄືນເມືອຫາພຣະບິດາຜູ້ໄດ້ຊົງສົ່ງພຣະອົງມາ. ສ່ວນອີກຝ່າຍໜຶ່ງກໍໃຫ້ພວກເຮົາເຫັນວ່າ ພາລະກິດແຫ່ງການປະກາດຂ່າວດີແຫ່ງການກັບເປັນຄືນມາຂອງພຣະເຢຊູເຈົ້ານີ້ກຳລັງເລີ່ມຕົ້ນຂຶ້ນ ໂດຍມີພວກອັກຄະສາວົກເປັນຜູ້ປະກາດແລະເປັນພິຍານເຖິງຂ່າວດີນີ້ໃຫ້ທຸກຊາດທຸກພາສາ. ຜູ້ໃດເຊື່ອຈະໄດ້ຮັບສົນລ້າງບາບໃນນາມຂອງພຣະບິດາແລະພຣະບຸດແລະພຣະຈິດ. ສ່ວນຜູ້ບໍ່ເຊື່ອຈະບໍ່ໄດ້ຮັບຄວາມຮອດ.

ໃນບົດອ່ານທີໜຶ່ງ, ຜູ້ຂຽນໜັງສືກິດຈະການຂອງພວກອັກຄະທຳມະທູດກໍໄດ້ປະກາດແລະເປັນພິຍານເຖິງພຣະເຢຊູເຈົ້າຫລັງຈາກການກັບເປັນຄືນມາຂອງພຣະອົງໂດຍກ່າວກັບກຸ່ມຊຸມຊົນຄວາມເຊື່ອຂອງທ່ານວ່າ: “ເທໂອຟີໂລເອີຍ, ໃນໜັງສືເຫລັ້ມຕົ້ນ (ອັນໝາຍເຖິງ ພຣະວໍລະສານໂດຍນັກບຸນລູກາ), ເຮົາໄດ້ກ່າວເຖິງທຸກສິ່ງທີ່ພຣະເຢຊູເຈົ້າໄດ້ຊົງກະທຳແລະສັ່ງສອນ. ຕັ້ງແຕ່ຕົ້ນຈົນຮອດວັນພຣະອົງຊົງຖືກຍົກຂຶ້ນສະຫວັນ”. ຄຳວ່າ: “ເທໂອຟີໂລ” ນີ້ ອາດເປັນນາມຊື່ສະເພາະຂອງບຸກຄົນໃດໜຶ່ງໃນສະໄໝນັ້ນທີ່ມີຄວາມໝາຍ “ຜູ້ຊຶ່ງພຣະເຈົ້າຮັກແພງ”. ແລະນາມຊື່ນີ້ກໍອາດຈະໝາຍເຖິງພວກເຮົາແຕ່ລະຄົນທີ່ພຣະອົງຊົງເລືອກສັນໃຫ້ມາເປັນລູກຂອງພຣະອົງຜ່ານທາງສົນລ້າງບາບ. ເພື່ອພວກເຮົາຈະໄດ້ມີຊີວິດໃໝ່, ຊີວິດນິລັນດອນ. ດັ່ງທີ່ນັກບຸນມັກໂກໄດ້ກ່າວໃນພຣະວໍລະສານວັນນີ້.

ຜູ້ທີ່ເປັນລູກຂອງພຣະເຈົ້ານີ້ແມ່ນຜູ້ທີ່ຄ້າຍຄືກັບພຣະອົງຄື ເປັນຜູ້ມີໃຈສຸພາບ, ມີຄວາມອ່ອນຫວານ, ພາກພຽນອົດທົນແລະຮັກແພງຊຶ່ງກັນແລະກັນ. ດັ່ງທີ່ນັກບຸນເປົາໂລໄດ້ກ່າວວັນນີ້ໃນບົດອ່ານທີສອງ.

ເມື່ອພວກເຮົາຄ້າຍຄືກັບພຣະເຈົ້າ, ພວກເຮົາກໍເປັນພິຍານແລະປະກາດເຖິງພຣະອົງໃຫ້ກັບຄົນອື່ນ. ເພື່ອທຸກຄົນຈະໄດ້ຮູ້ຈັກ, ເຊື່ອແລະມາເປັນສິດຂອງພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ລູກຂໍຂອບພຣະຄຸນພຣະອົງທີ່ໄດ້ຊົງຮັກແພງແລະເລືອກສັນລູກໃຫ້ມາເປັນສິດ, ເປັນຜູ້ປະກາດແລະເປັນພິຍານເຖິງພຣະອົງໃນຊີວິດຂອງລູກ. ໂຜດຊ່ວຍລູກໃຫ້ໝັ້ນຄົງແລະສັດຊື່ໃນການເປັນສິດແລະເປັນພິຍານເຖິງພຣະອົງຕະຫລອດຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ